# ພາບກອນສອນຄຳ



ແຕ່ງໂດຍ ມະຫາສີລາ ວີຣະວົງສ໌

# ກາບກອນສອນຄຳ

ປຶ້ມອ່ານເສີມ ສຳລັບຜູ້ເລີ່ມຕົ້ນຮຽນພາສາລາວ

ແຕ່ງໂດຍ: ມະຫາສີລາ ວີຣະວົງສ໌

ແຕ້ມໂດຍ: ວົງສະຫວັນ ດຳລົງສຸກ

**ກາບກອນສອນຄຳ** ປຶ້ມອ່ານເສີມ ສຳລັບຜູ່ເລີ່ມຕົ້ນຮຽນພາສາລາວ

ແຕ່ງໂດຍ ມະຫາ ສີລາ ວີລະວົງສ໌

ຮູບແຕ້ມໂດຍ ວົງສະຫວັນ ດຳລົງສຸກ

ຈັດໜ້າ ແລະອອກແບບ: ບໍລິສັດ ດອກເກດ ຈັດພິມ ຈຳກັດຜູ້ດຽວ

ບັນນາທິການໂດຍ: ດາລາ ກັນລະຍາ, ດວງເດືອນ ບຸນຍາວົງ

ຈັດພິມໂດຍ: ບໍລິສັດ ດອກເກດ ຈັດພິມຈຳກັດຜູ້ດຽວ, ໂທ 21-263748
056 ເຂດຖາທິຣາດ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ,
ນະຄອນຫລວງວຽງຈັນ.

ຈັດພິມຄັ້ງທີ 2, ຈຳນວນພິມ: 5000 ຫົວ

ຕາມ ລທບ: 108/ພຈ 17062008

ພິມທີ່ ໂຮງພິມມັນທາຕຸລາດ, ນະຄອນຫຼວງວຽງຈັນ 2008.

© ສະຫງວນລິຂະສິດ ບົດ 2008 ບໍລິສັດ ດອກເກດ ການພິມ ຈຳກັດຜູ້ດຽວ.

© ສະຫງວນລິຂະສິດ ຮູບແຕ້ມ 2008 ວົງສະຫວັນ ດຳລົງສຸກ.

ຜູ້ໃດຫາກນຳເອົາບົດກອນ ຫລືຮູບແຕ້ມ ໃນນີ້ ໄປນຳໃຊ້ ກໍຈົ່ງໄດ້ອ້າງອີງຊື່ຜູ່ແຕ່ງ ແລະປີພິມປຶ້ມເຫຼັ້ມນີ້ ເພື່ອການເຜີຍແຜ່ ແລະໃຫ້ກຽດກັບຜູ້ປະດິດຄິດແຕ່ງ.

# ຄຳນຳໃນການຈັດພິມ

ອີກຄັ້ງໜຶ່ງ ບໍລິສັດ ດອກເກດ ການພິມຈຳກັດ ມີຄວາມພູມໃຈນຳສະເໜີປຶ້ມອ່ານ ກາບກອນສອນຄຳ ທີ່ ທ່ານ ມະຫາ ສີລາ ວີຣະວົງສ໌ ນັກອັກສອນສາດວັນນະຄະດີລາວ ໄດ້ແຕ່ງໄວ້ເປັນມໍລະດົກຕັ້ງແຕ່ຄາວການຮຽນການສອນພາສາ ລາວ ຕ້ອງດຳເນີນຢູ່ພາຍໃຕ້ການປົກຄອງຂອງຝຣັ່ງ. ເຖິງວ່າບົດອ່ານເຫຼົ່ານີ້ ມີອາຍຸກວ່າເຄິ່ງສະຕະວັດແລ້ວກໍຕາມ ແຕ່ຄວາມມ່ວນ ຄວາມອອນຊອນ ສະທ້ອນວັດທະນະທຳ ວິຖີຊີວິດຂອງຊາວລາວ ຍັງຄົງເປັນອຳມະຕະ ແລະປ່ຽມລົ້ນ ດ້ວຍຄວາມໝາຍ ຍາກທີ່ຈະຫາບົດກອນໃດທຽມທັນໄດ້.

ປຶ້ມທີ່ທ່ານມະຫາສີລາແຕ່ງໄວ້ຫົວນີ້ເຖິງວ່າສະໄໝກ່ອນໃຊ້ເປັນປຶ້ມຮຽນສຳລັບເດັກນ້ອຍໃນຊັ້ນປະຖົມປີທີ 1 ແຕ່ກໍມີ ພື້ນຖານດ້ານໄວຍາກອນແຂງສົມຄວນ ຖ້ານຳໃຊ້ເປັນບົດອ່ານເສີມ ກໍຄົງຈະຊ່ອຍໃຫ້ເດັກນ້ອຍ ຟ້ອງຄຳໄດ້ຫຼາຍຂຶ້ນ ພ້ອມທັງເກີດມີຄວາມນິຍົມຊົມຊອບ ເຂົ້າໃຈກົດເກນກາບກອນລາວພໍສົມຄວນ.

ບົດກະວີໃນນີ້ ມີທັງກາບ ແລະກອນ ເຊິ່ງສາມາດນຳໄປເຊີ້ງ ຂັບລຳ ຫຼືຮ້ອງເປັນເພງໃສ່ທຳນອງໃໝ່ ຫຼືທຳນອງເກົ່າ ກໍໄດ້ ພໍ່ແມ່ຫຼືຄູນັກເຄື່ອນໄຫວກິດຈະກຳ ສົ່ງເສີມການອ່ານ ສາມາດນຳໃຊ້ເພື່ອຊັກຊວນໃຫ້ເດັກນ້ອຍມ່ວນນຳກາບກອນ ລາວ ແລ້ວເຂົາກໍຈະໄດ້ສະແຫວງຫາອ່ານຕໍ່ໆໄປ.

ວຽງຈັນ ມິຖຸນາ 2008

ດອກເກດ ການພິມຈຳກັດ

# ຄຳສະເໜີ

## ກາບກອນສອນຄຳ ອ່ານເສີມໄດ້ທຸກເວລາ

ເຖິງ ພໍ່ ແມ່ ແລະຜູ້ ສອນອ່ານ ສອນຂຽນ ທຸກຄົນ

ກາບກອນສອນຄຳ ເຫຼັ້ມນີ້ ດັດແປງ-ປັບປຸງມາຈາກ ປື້ມຮຽນ ສຳລັບຊັ້ນ ປ.1 ຂຽນໂດຍ ທ່ານ ມະຫາສີລາ ວີຣະວົງສ໌ ເມື່ອຫ້າສິບປີກ່ອນ ເມື່ອຄັ້ງທີ່ການຮຽນການສອນ ພາສາລາວຫາກໍດຸກດໍກໍ່ໃໝ່ ຕຳລາພາສາລາວ ສຳລັບຂັ້ນປະຖົມສຶກສາ ກໍຄືຂັ້ນອື່ນໆ ຍັງເປັນສິ່ງທີ່ຫາຍາກຢູ່. ເຖິງຢ່າງນັ້ນກໍຕາມ ປື້ມຫົວນີ້ກໍໄດ້ເປັນຕຳລາຮຽນພາສາລາວ ເຫຼັ້ມທຳອິດ ຂອງຜູ້ເຂົ້າໂຮງຮຽນປະຖົມສຶກສາໃນປະເທດລາວ ຕິດຕໍ່ກັນຢູ່ຫຼາຍທົດສະວັດໄດ້ຮັບການປັບປຸງດັດແປງແດ່ ຕາມຍຸກສະໄໝ. ຈຸດພິເສດຂອງປື້ມຫົວນີ້ ແມ່ນວິທີການນຳສະເໜີ ພະຍັນຊະນະ ຄວບຄູ່ກັບສະຫຼະ ໄປພ້ອມໆກັນ ໂດຍຄຳນຶງເຖິງກົດເກນທຳມະຊາດການອອກສຽງຂອງເດັກນ້ອຍ ທີ່ປາກເວົ້າພາສາແມ່ໄດ້ລ່ຽນ ຕັ້ງແຕ່ຢູ່ເຮືອນ ທັງຮູ້ຄຳສັບພື້ນຖານຈຳນວນໜຶ່ງແລ້ວ ວິທີນີ້ເຫັນວ່າສອດຄ່ອງກັບທິດສະດີ ພັດທະນາການທາງພາສາຂອງເດັກ ຄືເມື່ອເລີ່ມຮຽນປາກເວົ້າອອກສຽງ (ນັບແຕ່ອາຍຸ 1-2 ປີຂຶ້ນໄປ) ເດັກຈະເວົ້າເປັນຄຳໆ ທີ່ມີຄວາມໝາຍສຳລັບເຂົາແລ້ວ ເຊັ່ນວ່າ ມຳມຳ(ກິນ), ໂອະໂອະ (ເຈັບ) ແມ່ ພໍ່ ປໍ່ ແມ່ມາຫາເອົາແດ່ ໄປນຳ..., ບໍ່ໄດ້ເລີ່ມເວົ້າດ້ວຍ ສະຫຼະ ຫຼື ພະຍັນຊະນະ ແບບດ່ຽວໆ. ການອ່ານຄຳສັບ ຫຼື ປະໂຫຍກທີ່ເຂົາເຂົ້າໃຈຮູ້ຄວາມໝາຍ ຈຶ່ງເປັນການກະຕຸ້ນສົ່ງເສີມຂະບວນການຮຽນຮູ້ຂອງພວກເຂົາ. ເມື່ອເດັກເຂົ້າໃຈລະຫັດ (ດ້ວຍການ ອ່ານຄຳ) ໄດ້ ພວກເຂົາກໍຍິ່ງຢາກອ່ານຢາກຮຽນຕື່ມຂຶ້ນ ເພາະຄຳສັບແຕ່ລະຄຳ ປະໂຫຍກແຕ່ລະປະໂຫຍກ ໝາຍເຖິງການຄົ້ນພົບໃໝ່ໆຂອງເຂົາ.

ນອກຈາກຄຳ ແລະປະໂຫຍກສັ້ນໆ ຄ່ອງຟັດກັນດີແລ້ວ ໃນປຶ້ມຫົວນີ້ ຍັງມີບົດອ່ານປະກອບດ້ວຍຄຳສະກົດ ກັບທຸກໆ ສະຫຼະໃນຕົວສະກົດໜຶ່ງໆ ຕິດຕາມດ້ວຍບົດອ່ານ ແລະບົດກາບກອນອັນອຸດົມດ້ວຍເນື້ອເລື່ອງ ວັດທະນະທຳ ສັງຄົມ ປະຫວັດສາດ ທຳມະຊາດ. ຈາກບົດກອນ "ຄອບຄົວຂອງຂ້ອຍ, ໝູ່ຄູ່ໃນໂຮງຮຽນ" ຈົນຮອດ "ປະເທດຂ້ອຍ ຊັ້ນຊື່ເມືອງລາວ" ພາສາກະວີງ່າຍດາຍ ແຕ່ເລິກເຊິ່ງອອນຊອນ ຈະຕິດຕາມນຳພາເດັກນ້ອຍອອກຈາກ ໂລກສ່ວນຕົວ (ຄອບຄົວ, ໂຮງຮຽນ) ໄປສູ່ສັງຄົມທີ່ກວ້າງກວ່າ (ວັດ) ເຂົ້າຊົມພູຜາປ່າດົງ ແລະທຳມະຊາດແຄມຝັ່ງຂອງ (ຟັງສຽງ ເສືອສິງຊ້າງ ຄະນອງເນືອງ ໃນປ່າ, ແລເຫັນຟ້າ ມືດຄຶ້ມ ຄະນົງເນັ່ງບັງບົດ...) ແລະໃນທີ່ສຸດ ເຂົ້າສູ່ສຳນຶກກ່ຽວກັບປະເທດຊາດ ດ້ວຍບົດກອນ "ປະເທດຂ້ອຍຊັ້ນຊື່ເມືອງລາວ ລວງກວ້າງຍາວ ສຸດຕາເຫຼືອອ່ານ ນ້ຳຂອງຜ່ານ ໄຫຼຜ່າທາງກາງ..." ບົດກອນອຳມະຕະ ທີ່ຢູ່ໃນຄວາມຊົງຈຳຂອງຫຼາຍຜູ້ຫຼາຍຄົນ.

ການໄດ້ອ່ານ ແລະເລົ່າກາບກອນງ່າຍໆ ຈະເສີມສ້າງຄວາມສາມາດດ້ານອື່ນໆຂອງເດັກ ຢ່າງບໍ່ຕ້ອງສົງໄສ ເຊັ່ນ ການປາກເວົ້າ ກິລິຍາ ການອອກຄວາມຄິດເຫັນທີ່ ຈະແຈ້ງ(ເວົ້າແຈ້ງ) ຄວາມສາມາດເຂົ້າໃຈໄວ ຄິດອອກງ່າຍ ເພາະປະສາດສະໝອງໄດ້ຮັບການກະຕຸ້ນຢູ່ເລື້ອຍໆ ຈາກການອ່ານແລະເລົ່າ.

ພວກຂ້າພະເຈົ້າ ໃນນາມລູກຫຼານເຊື້ອສາຍ ມະຫາສິລາ ກໍຄືຜູ້ສືບທອດອື່ນໆ ມີຄວາມພາກພູມໃຈທີ່ໄດ້ເປັນສ່ວນໜຶ່ງຂອງຂະບວນການສືບທອດພາສາລາວ ອັນເປັນມໍລະດົກຮ່ວມແຫ່ງຊາດ ແລະມີສ່ວນໃນການເສີມສ້າງບຳລຸງນິໄສມັກອ່ານ ຊອກຮູ້ ຊອກຮຽນ ຂອງລູກຫຼານຜູ້ເກີດໃໝ່ໃຫຍ່ລຸນສືບຕໍ່ໄປ.

ຂໍຂອບໃຈ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແລະກົມພິມຈຳໜ່າຍ ກະຊວງຖະແຫຼງຂ່າວ ແລະວັດທະນະທຳ ຜູ້ຊີ້ນຳວຽກງານຈັດພິມ ທີ່ເຂົ້າໃຈຈຸດປະສົງຂອງການຈັດພິມໃນຄັ້ງນີ້.

ວຽງຈັນ ເດືອນ ມີນາ 2008

ດວງເດືອນ (ວິຣະວົງສ໌) ບຸນຍາວົງ


ປາກະເດີດ
ປາຫຼົດ
ປາດຸກ

# ປ ບ xາ

| | | | | | |
|---|---|---|---|---|---|
| ປ | ປ | ບ | ບ | າ | າ |
| ບ | ບ | ປ | ບ | ປ | ປ |
| ປາ | ບ | າ | ບາ | ປາ | ບ |
| ບາ | ບ | ບາ | ປາ | ປາ | ບາ |
| ບາ | າ | ປາ | າ | ບາ | ບາ |



ປາທູ



ເຝິກຂຽນ: ປ xາ ປາ ບ xາ ບາ

ປ ປ

xາ xາ

ປາ ປາ

ເຝິກຂຽນ: ບ ບ ບ ບາ

ບາ ປ ປາ

ບ

າ

ບາ

ປາ

ບ

າ

ບາ

ປາ

ຊະບາ



ຄູບາ



ງົວບາ



ບາຫຼອດ

24/VH ห้ามจำหน่าย

# ດ xາ

| | | | | |
|---|---|---|---|---|
| ດ | ດ | ດ | xາ | xາ |
| ດ | xາ | ດາ | ດາ | ດາ |
| ດາ | ບາ | ປາ | ບາ | ດາ |
| ບາ | ປາ | ດາ | ບາ | ປາ |

ເຝິກຂຽນ: ດ ດາ ປາ ບ ບາ
ດາ ປ ປາ ບາ

ດ

ດາ

ບາປາ




ແມງດາ





ສີດາ

# ຕ   Xະ

| | | | | |
|---|---|---|---|---|
| ດະ | ດ | xາ | ປ | ບະ |
| ຕາ | ຕາ | ຕະ | ຕະ | ບະ |
| ປະ | ດະ | ຕະ | ຕາ | ຕາ |
| ຕາ | ປາ | ບາ | ດາ | ຕາ |
| ປະ | ປາ | ປະ | ດາ | ຕາປາ |

ເຝິກຂຽນ: ດ ຕ ບ ປ ຕາ ປາ ຕ

ະ

ຕະ

ຕາປາ



ຕາຄົນ



ຕາແຂ້



ຕາປາ

# xິ xີ

ກ xິ ກິ xີ ກີ ດິ ຕິ ບິ ປີ ຕີ

ບີ ດີ ດິ ກະ ຕິ ດາ ກີ ກະປີ ຕີຕາ

ບິດາ ກາກີ ຕາປາ ຕາກາ ກະບະ

ກະດີ ບິປາ ກະປີດີ ບິດາ ບິປາ

ຕາດີຕີກາ



ກາ





ກະປິ



ປີ

ຝຶກຂຽນ: ຕາປີ ຕີກາ

ິ ີ

ຕາປີ

ຕີກາ

# xຶ xື ອ ຈ



ອຶ

ອ xຶ ອຶ

ຈ xື ຈື ຕ xື ຕື ກ ກື ຈະ

ປີ ອາ ອື ຈຶ ຈະ ອາ ຈິ ກື ຈາ

ບະ ອາດີ ຈະຕື ກະບື ກີປາ ກະຈາ

ຈະຕີກາ ອາຈະບິປາ ກະບືຕາດີ



ກະບື

ເຝິກຂຽນ: ອ ຈ ຕາດີ ຕີກະບື

ຶ ື ອ ຈ

ຕາດີ

ຕີກະບື



ບັ້ງກື



ກີປາ (ຄີປາ)

# ປ  xຸ  xູ

ປ xຸ ປຸ ປ xູ ປູ ດະປຸ ຕູ
ປາດຸ ປຸ ບະ ກະ ຈຸ ບຸ ປາ
ຕາປູ ປະຕູ ກະປູ ປາດີ ດູກາ
ອາດຸດີ ຕາດີຕີປາ ອາຕີກະບີ



ສະບູ




ປາດີ



ກະປູ

ເຝິກຂຽນ: ປ xຸ xູ ປ ປຸ ປູ

ປ

ຸ ູ

ປູ

# ບົດຊ້ອມ

| ປ | ບ | ດ | ຕ | ກ | ອ | ຈ | ຢ |
|---|---|---|---|---|---|---|---|

| | |
|---|---|
| xະ | xາ |
| xິ | xີ |
| xຶ | xື |
| xຸ | xູ |

| | xະ | າ | xິ | xີ | xຶ | xື | xຸ | xູ |
|---|---|---|---|---|---|---|---|---|
| ປ | ປະ | ປາ | ປິ | ປີ | ປຶ | ປື | ປຸ | ປູ |
| ບ | ບະ | ບາ | ບິ | ບີ | ບຶ | ບື | ບຸ | ບູ |
| ດ | ດະ | ດາ | ດິ | ດີ | ດຶ | ດື | ດຸ | ດູ |
| ຕ | ຕະ | ຕາ | ຕິ | ຕີ | ຕຶ | ຕື | ຕຸ | ຕູ |
| ກ | ກະ | ກາ | ກິ | ກີ | ກຶ | ກື | ກຸ | ກູ |
| ອ | ອະ | ອາ | ອິ | ອີ | ອຶ | ອື | ອຸ | ອູ |
| ຈ | ຈະ | ຈາ | ຈິ | ຈີ | ຈຶ | ຈື | ຈຸ | ຈູ |
| ຢ | ຢະ | ຢາ | ຢິ | ຢີ | ຢຶ | ຢື | ຢຸ | ຢູ |

ເຝິກອ່ານ: ຕາປາ ຕາກາ ກະບະ ກະປູ ຕາປູ ກະດີ ບິດາ

ຢາດີ ກະປີ ບິກາ ກະບີ ບິດາຈະຕີປູ ປະຕູກະດີ ຕາບຸຕີປະຕູ

# ກ ຂ ຄ

ຂ ຄ ຂິ ຄີ ຂາ ຄະ ຂຸ ຄູ

ຂະ ຄາ ຄູບາ ຕາດີ ຂາປູຂຸ

ຄຸຄາປາ ຄຸອາດີ ຂາກະບື ອາຈະຕີ



ຂາ



ຄູບາ



ຄຸ

ເຝິກຂຽນ: ຂ ຄ ຂາກະບື

ຂ

ຄ

ຂາກະບື

# ເXະ ເX ແXະ ແX

ແxະ ກ ແກະ ແປະ ແຈ ເປ

ເຕະ ແບ ເຄ ແຄະ ເບະແຕ

ແຈະ ເຂ ແກ ເຈດີ ຄີປາ

ກະແຕະແປະຢາ ປາແປະ ແຈປະຕູ

ອາດີແຄະຢາ ຕາຕີກະບີແປະໆ

ເຝິກຂຽນ: ເ ແ ແກະຂາເຄ

ເ

ແ

ແກະຂາເຄ



ກະແຈ

ເຈດີ



ແກະ

# ຕ ຖ ທ

ຖ ທ ຖ ທ ທ ×າ ທາ ເທ ທິ ແທ

ແຖ ຖູ ທຸ ທິ ຖີ ແທະ ຖື ກະທິ

ປາທູ ຖູຕາ ທາຊຸ ທຸຊູບາ ທາປະຕູ

ດູກະແທະ ຕາແປະ ແຖຂາ ອາຖູກະທະ



ປາທູ



ກະທະ

ເຝິກຂຽນ: ຖ ທ ທຸຊູບາ

ຖ

ທ

ທຸຊູບາ



ກະທິ



ມີດແຖ

# ໂxະ ໂx ເxາະ xໍ

ກ ເxາະ ເກາະ ເບາະ ໂຕະ

ໂອ ເຕາະ ຂ ໂຄ ປ ເຂາະ ເຄາະ

ຄ ໂຈະ ຕໍ ໂປ ເອາະ ໂຢະ ຖືໂອ

ເອາະປາ ກະໂປະ ຂໍເກາະ ຄາຄໍ ແຈເບາະ

ປີເຖາະ ເຄາະປະຕູ ອາເຈາະ ກະທໍຢາ

ຄືປາໂດ



ປາໂດ



ກະໂປະ





ເຂາະ

ຝຶກຂຽນ: ໂ ເxາະ ປີເຖາະ

ໂ

ເxາະ

ປີເຖາະ



ໂອ

24 / VII
ຫ້າມຈຳໜ່າຍ

# ປ ຜ ພ

ພ ຜ ພ ຜ ພ

xາ ພາ ຜາ ພູ ເພ

ແພ ໂພ ເພາະ ເຜາະ ພູຜາ

ປາເຜາະ ກະເພາະ ພໍດີ ແປະພູ

ຢາທາແຜ ກະແທະເພ ອາດີຈະຖືແພ



ກໍໄຜ່

ເຝິກຂຽນ: ຜ ພ ພູຜາ

ຜ

ພ

ພູຜາ



ແພ



ຢາທາແຜ

# ບົດຊ້ອມ

| | | |
|---|---|---|
| ກ | ຂ | ຄ |
| ຕ | ຖ | ທ |
| ປ | ຜ | ພ |

| | |
|---|---|
| ເxະ | ເx |
| ແxະ | ແx |
| ໂxະ | ໂx |
| ເxາະ | xໍ |

| | ກ | ຂ | ຄ | ຕ | ຖ | ທ | ປ | ຜ | ພ |
|---|---|---|---|---|---|---|---|---|---|
| ເxະ | ເກະ | ເຂະ | ເຄະ | ເຕະ | ເຖະ | ເທະ | ເປະ | ເຜະ | ເພະ |
| ເx | ເກ | ເຂ | ເຄ | ເຕ | ເຖ | ເທ | ເປ | ເຜ | ເພ |
| ແxະ | ແກະ | ແຂະ | ແຄະ | ແຕະ | ແຖະ | ແທະ | ແປະ | ແຜະ | ແພະ |
| ແx | ແກ | ແຂ | ແຄ | ແຕ | ແຖ | ແທ | ແປ | ແຜ | ແພ |
| ໂxະ | ໂກະ | ໂຂະ | ໂຄະ | ໂຕະ | ໂຖະ | ໂທະ | ໂປະ | ໂຜະ | ໂພະ |
| ໂx | ໂກ | ໂຂ | ໂຄ | ໂຕ | ໂຖ | ໂທ | ໂປ | ໂຜ | ໂພ |
| ເxາະ | ເກາະ | ເຂາະ | ເຄາະ | ເຕາະ | ເຖາະ | ເທາະ | ເປາະ | ເຜາະ | ເພາະ |
| xໍ | ກໍ | ຄໍ | ຂໍ | ຕໍ | ຖໍ | ທໍ | ປໍ | ຜໍ | ພໍ |

ບົດອ່ານ: ພໍດີ ປີເຖາະ ເຄາະປະຕູ ພູຜາ ຂາເຂ ຢາທາແຜ ກະແທະເພ
ຄືປາໂດ ຂໍເກາະ ກະທໍຢາ ອາຖືແພ ຖູກະທະ ຕາດີ ຖືໂອ ຄູບາທາເຈດີ

# ຝ ຟ

ຜ ພ ຝ ຟ

ຝ ຝາ ຟາ ເຟ

ຟູ ຝີ ແຝະ ແຟະ ຟາ ຝາ

ປາຝາ ກາເຟ ຢາຝີ ເອາະປາຝາ

ເຈາະຝາປາຕູ ດູປາຟູ ແຟະແຟະ



ກາເຟ

ເຝິກຂຽນ: ຝ ຟ ປາຝາ

ຝ

ຟ

ປາຝາ



ປາຝາ

# ເຂີ ເຂື ເຂັຽ ເຂຽ




ເຂີ ເຂື ເຂັຽ ເຂຽ ຈ ເຂັຽ ເຈັຽ

ເພັຽ ເປີ ເຈີ ເປີ ເຜີ ເຂັຽ ເຄັຽ ເຈຽ

ເພຽເຂັຽ ເມຽເກີ ເອັຽ ໂຕເຈຽ ຕາເພຽຕີເຂັຽ

ເປັຽເປັຽ ເກີດູເຈຽ ເປີຝາກະດີ




ເຝິກຂຽນ: ເຂີ ເຂັຽ ອາຕີເຂັຽ

ເຂີ

ເຂັຽ

ອາຕີເຂັຽ

# ສ ຊ

ຊ ສ ຊ ສ ສ xໍ ສໍ ຊໍ ສີ ຊິ ສຸ

ສີ ຊູ ໂຊ ຊາ ສາ ເສຽ ເຊ ແສະ ເສາະ

ເຊາະ ເຊຽ ສໍສີ ສະບູ ສີຊໍ ໂຊະເຊະ ສະປາ

ເສຽສີ ອາສາ ສີສະ ຜາສີ ເກສາ

ສຸສະບູ ອາເສໂຊ ຊິຝາປະຕູ


ຊໍ

ສີສະ


ເຝິກຂຽນ: ສ ຊ ສີຊໍ ສຸສະບູ

ສ ຊ

ສີຊໍ

ສຸສະບູ


ສໍ


ສໍສີ

# Xົວະ Xົວ ເXືອ ເXືອ

Xົວະ　Xົວ　ເXືອ　ເXືອ　ສ

ເXືອ　ເສືອ　ເກືອ　ບົວ　ຕົວ

ຕົວະ　ຂົວ　ເຂືອ　ເຄືອ　ຜົວ

ເຜືອ　ເຂືອ　ເຄືອ　ທາເປືອ　ປົວຕາ

ກະທໍເກືອ　ຈົວບູຊາພະ　ເສືອເກີດູກະບື










ເຝິກຂຽນ:　ົວ　ເືອ　ອາບົວເຄືອ

ົວ　ເືອ

ອາບົວເຄືອ



# ຫ ຮ


ເຮືອເຫາະ

ຮ ຫ ຮ ຫ ຮ ເ×ືອ ເຮືອ ຮູ
ຫາ ເຫາະ ຫູ ຫໍ ເຮາະ ເຫາະ ໂຮ
ຫົວ ຫໍ ຮໍ ເຮີ ຫີ ເຮືອເຫາະ ຮູຫູ
ຫໍຜີ ຫົວເຮືອ ຮໍປາ ເຫາະຫາ ອາແຮ
ໂຮເຮ ຕາສີຊູແຫ ຫາປາດຸ ຫົວເຮືອແຮະຜາ

ເຮືອ



ຫໍຜີ


ຮູຫູ

ຝຶກຂຽນ: ຫ ຮ ເຮືອ ເຫາະ

ຫ

ຮ

ເຮືອເຫາະ

# ບົດຊ້ອມ

| | |
|---|---|
| ຜ | ຝ |
| ສ | ຊ |
| ຫ | ຮ |

| | |
|---|---|
| ເxິ | ເxີ |
| ເxັຽ | ເxຽ |
| xົວະ | xົວ |
| ເxຶອ | ເxືອ |

| | ເxິ | ເxີ | ເxັຽ | ເxຽ | xົວະ | xົວ | ເxຶອ | ເxືອ |
|---|---|---|---|---|---|---|---|---|
| ຜ | ເຜິ | ເຜີ | ເຜັຽ | ເຜຽ | ຜົວະ | ຜົວ | ເຜຶອ | ເຜືອ |
| ຝ | ເຝິ | ເຝີ | ເຝັຽ | ເຝຽ | ຝົວະ | ຝົວ | ເຝຶອ | ເຝືອ |
| ສ | ເສິ | ເສີ | ເສັຽ | ເສຽ | ສົວະ | ສົວ | ເສຶອ | ເສືອ |
| ຊ | ເຊິ | ເຊີ | ເຊັຽ | ເຊຽ | ຊົວະ | ຊົວ | ເຊຶອ | ເຊືອ |
| ຫ | ເຫິ | ເຫີ | ເຫັຽ | ເຫຽ | ຫົວະ | ຫົວ | ເຫຶອ | ເຫືອ |
| ຮ | ເຮິ | ເຮີ | ເຮັຽ | ເຮຽ | ຮົວະ | ຮົວ | ເຮຶອ | ເຮືອ |

ບົດອ່ານ: ອາບົວເຄືອ ຫາສະບູ ສຸແພແຮ ເສຽສີ ຕາຊູແຫ ຫາປາດຸ
ຫົວເຮືອ ຄາເຄືອບົວ ຊາຕາດີ ໂຮເຮສີຊໍ ຕີເຂັຽ ເຜັຽໆ ຫົວຮຶໆ

# ໄx ໃx ເxົາ xໍາ

ໄx ປ ໄປ ໄຫ ໄກ ໃບ ໃຈ ເxົາ

ອ ເອົາ ເປົາ ດ xໍາ ດໍາ ຕໍາ ໄຫໄພ

ໃບບົວ ຫົວໃຈ ໄປຫາໃຜ ຫົວສີໄຄ

ໄຂກະເປົາ ເອົາຄໍາໃບ ເສາະໃສ

ຖູໄຖໄປໃສ ເຮົາດີໃຈ ເພາະເຮົາເຊົາໄອ



ໃບບົວ



ກະເປົາ



ໄຫໄພ



ຫົວສີໄຄ

ເຝິກຂຽນ: ເອົາຄໍາໃບ ໄປຫາໃຜ

ເອົາຄໍາໃບ

ໄປຫາໃຜ

# ງ ຍ

ງ ງູ ເງີ ຍ ເຍົາ ງາ ຍີ ງົວ
ໂຍະ ເຍະ ເງາະ ໂງເງ ໂຍະເຍະ
ງູສາ ງາໄຊ ງົວດຳ ຍຳປີ
ໃຍບົວ ກະຍື ງູໄປໂງເງ ເງາະແງະ
ຂົວເຜໂຍະເຍະ ຕາຈະເອົາ ງົວສີດຳໄປໃສ


ໝາກເງາະ


ງາ

ເຝິກຂຽນ: ໂຍະເຍະ ເງາະແງະ

ໂຍະເຍະ

ເງາະແງະ


ໝາກຍໍ

247/VIII
ຫ້າມຈຳໜ່າຍ

# ນ ມ

ນ ×າ ນາ ມາ ມິ ມື ນະ ເນາະ ເມືອນາ
ມານຳ ມາດາ ຜິວເມຽ ດຳນາ ທະນູ ແບມື
ປີມະແມ ອາສຸນີ ມີນໍ ຄູມາຫາ ແນທະນູ
ມີໃຈມານະ ເຮົາຈະໄປນຳຫາບິດາມາດາ



ແມວ



ນໍ

ເຝິກຂຽນ: ນ ມ ມີໃຈມານະ

ນ

ມ

ມີໃຈມານະ



ແບມື



ທະນູ

# ຣ ລ ວ




ນາລິກາ

ຣ ລ ວ ຣ ວ ຣີ ວີ ລີ ລາເລືອ ລຳ
ເວ ໂວ ເວລາ ລາຄາ ລີເລືອ ວິຊາ ແລດູ
ໂລເລ ເທາະເລາະ ນາລິກາ ວິທະຍາໄລ
ງູເລືອມາ ໄປໄວໆ ຄຳໃບມີລາຄາ

ເຝິກຂຽນ: ຣ ລ ວ ວິທະຍາໄລ

ຣ

ລ

ວ

ວິທະຍາໄລ



ວີ



ລີງ

# ບົດຊ້ອມ

| ງ | ຍ | ນ | ມ | ຣ | ລ | ວ |
|---|---|---|---|---|---|---|

| | ໄx | ໃx | ເxົາ | xໍາ |
|---|---|---|---|---|
| ງ | ໄງ | ໃງ | ເງົາ | ງໍາ |
| ຍ | ໄຍ | ໃຍ | ເຍົາ | ບໍາ |
| ນ | ໄນ | ໃນ | ເນົາ | ນໍາ |
| ມ | ໄມ | ໃມ | ເມົາ | ມໍາ |
| ຣ | ໄຣ | ໃຣ | ເຣົາ | ຣໍາ |
| ລ | ໄລ | ໃລ | ເລົາ | ລໍາ |
| ວ | ໄວ | ໃວ | ເວົາ | ວໍາ |

ຊ້ອມອ່ານ: ເວລາ ບາລິກາ ວິນາທີ ແລດູໄກ ໃນມື ຖືຄໍາໃບ
ມີສີເສາະໃສ ໃບຕາ ຫາວິຊາ ແລະກິລິຍາດີ ມີລາຄາ

# ອັກສອນປະສົມ

ເມື່ອເອົາຕົວ ຫ ນຳໜ້າອັກສອນ ງ ນ ມ ຣ ລ ວ ອັກສອນ 6 ຕົວນີ້ ກໍກາຍເປັນສຽງອັກສອນສອງ ຕົວປະສົມກັນ ຮຽກວ່າ ອັກສອນປະສົມ

| | +ງ | +ຍ | +ນ | +ມ | +ຣ | +ລ | +ວ |
|---|---|---|---|---|---|---|---|
| ຫ+ | ຫງ | ຫຍ | ຫນ | ຫມ | ຫຣ | ຫລ | ຫວ |

ແຕ່ວ່າເມື່ອເວລາຂຽນ ຕ້ອງຂຽນດັ່ງນີ້: ໜ ໝ ຫຼ

ໝາເຫງົາ ຣູໜູ ບິໝີ ພໍເໝາະ

ເຮືອໄຫຼ ຫວີຫົວ ໝາ ຫຼື ໜູ

ໝາຍເຫດ: ວິທີໃຊ້ ແມ່ນເອົາ ສະຫຼະ ໃສ່ເທິງ ຫຼືລຸ່ມ ອັກສອນປະສົມ, ແລະຕ້ອງໃສ່ເທິງ ຫຼື ລຸ່ມ ອັກສອນຕົວທີສອງສເໝີ

# ອັກສອນຄວບ

ເມື່ອເອົາຕົວ ຣ ລ ວ ນຳຫຼັງຕົວອັກສອນ ຕົວອື່ນ ຄື ຕ ຂ ຝ ຄ ກ ທ ອັກສອນສອງຕົວນັ້ນ ອ່ານອອກສຽງພ້ອມກັນ ຮຽກວ່າ ອັກສອນຄວບ ສ່ວນຫຼາຍ ແມ່ນສຽງຕົວໜ້າແຮງກວ່າ

| | +ຣ | +ລ | +ວ |
|---|---|---|---|
| ຕ+ | | ຕລ | ຕວ |
| ຂ+ | | | ຂວ |
| ຝ+ | ຝຣ | ຝລ | |
| ຄ+ | | | ຄວ |
| ກ | | | ກວ |
| ທ | | | ທວ |



ມືຂວາ

ຂວາ ຄວາ ຕວາ ມືຂວາ ຄວາຫາ ດີຕວາ ໄກວ

ໝາຍເຫດ: ຣ ໃຊ້ສະເພາະເວລາຂຽນທັບສັບພາສາຕ່າງປະເທດ ເຊັ່ນ: ຝຣັ່ງ, ກຣາບຟິກ

# ພະຍັນຊະນະ ສາມພວກ

ພະຍັນຊະນະ ແບ່ງອອກເປັນສາມພວກ:

| 1. ອັກສອນກາງ | 2. ອັກສອນສູງ | 3. ອັກສອນຕ່ຳ |
|---|---|---|
| ຈ | ຂ | ຄ |
| ບ | ຖ | ທ |
| ດ | ຜ | ພ |
| ຢ | ຝ | ຟ |
| ອ | ສ | ຊ |
| ກ | ຫ | ຣ |
| ຕ | **ອັກສອນປະສົມ** | ງ |
| ປ | ຫງ | ຍ |
| | ຫຍ | ນ |
| | ໜ | ມ |
| | ໝ | ຣ |
| | ຫຼ | ລ |
| | ຫວ | ວ |

ໝາຍເຫດ: ອັກສອນປະສົມ ອ່ານອອກສຽງສູງ ເໝືອນອັກສອນສູງ.

# ໄມ້ຜັນສຽງ x່ x້ x໊ x໋

ວິທີຜັນສຽງອັກສອນກາງ

ອັກສອນກາງ 8 ຕົວ ຄື: ກ ຈ ດ ຕ ບ ປ ຢ ອ

x່ x້ x໊ x໋

ບາ ບ່າ ບ້າ ບ໊າ ບ໋າ

ເຈຍ ເຈ່ຍ ເຈ້ຍ ເຈ໊ຍ ເຈ໋ຍ

ໂຕ ໂຕ໊ະ ເກາະ ເກ໊າະ ປາກ່າ

ໄກ່ປ່າ ອາແລະປ້າ ໂຕເຈຍ ເຈ່ຍໄປ

ເຈ້ຍສາ ເຕົາໄຟ ໄດ້ເຕົ່າມາແຕ່ປ່າ

ຕີໂປ໊ະ ປູ່ໄດ້ກະປູມາແຕ່ບາ ປ້າກູ້ແພປູໂຕ໊ະ



# ວິທີຜັນສຽງ ອັກສອນຕ່ຳ




ວິທີຜັນອັກສອນຕ່ຳ: ອັກສອນຕ່ຳ 13 ຕົວ ຄື ຄ ງ ຊ ທ ນ ພ ຟ ມ ຍ ຣ ລ ວ ຮ ຜັນສຽງໄດ້ແຕ່ໄມ້ ເອກ ແລະ ໂທ

ຄ ງ ຊ ທ ນ ພ ຟ ມ ຍ ຣ ລ ວ ຮ

x່ x້

ງາ ງ່າ ງ້າ ຊື ຊື່ ຊື້

ເທົາ ເທົ່າ ເທົ້າ ວາ ວ່າ

ຍ່າ ພ້າ ມ້າ ປີນີ້ ພໍ່ແມ່ ສີຟ້າ ຊື້ມື

ງາ ຊ້າ ງ່າໄມ້ ໃບຊໍ້ ຖືໄມ້ເທົ້າ ຂີ້ໃງ່ ເນື້ອປາ

ກໍໄລ່ ໄຮ່ນາ ໃຊ້ດີ ອາໃພ້ ງ່າໄມ້






# ວິທີຜັນສຽງ ອັກສອນສູງ

ອັກສອນສູງ 6 ຕົວ : ຂ ສ ຖ ຜ ຝ ຫ ແລະອັກສອນປະສົມ ຜັນສຽງໄດ້ ແຕ່ໄມ້ ເອກ ແລະ ໂທ

ຂ ສ ຖ ຜ ຝ ຫ ຫງ ຫຍ ຫນ ຫມ ຫຣ ຫວ

| | | | | | | | | |
|---|---|---|---|---|---|---|---|---|
| | x່ | x້ | | | | | | |
| ຂາ | ຂ່າ | ຂ້າ | ເສືອ | ເສື່ອ | ເສື້ອ | ໝູ | ໝູ່ | ໝູ້ |
| ໄຂກະບະ | ໄຂ່ໄກ່ | ໄຂ້ປ່າ | ໄປໃສ | ເອົາໃສ່ | ໄສ້ອົ່ວ | ຫົວຂ່າ | ເອົາໃຫ້ | |
| ເສື້ອຜ້າ | ຂ້າເສືອ | ປູເສື່ອ | ໜໍ່ໄມ້ | ຫາເຫຍື່ອ | ບ່າໄຫຼ່ | ໝູ່ໝູ | ຜູ້ເຖົ້າ | |

ຖືໄມ້ເທົ້າ ເຮືອເຫາະ ເຂົ້າເຜື້ອ



ຂ່າ



ໜໍ່ໄມ້



ເສື່ອ



ເສືອ

# ຫັດອ່ານ ແມ່ ກະ ກາ

ພໍ່ເຖົ້າສາ ໄປທຳນາ ຢູ່ແຈປ່າ.
ຢູ່ປ່າຫົວນາ ມີກໍຄ້າ ປ່າຂ່າ ແລະກໍໄຜ່
ໃນເວລາຄ່ຳ ມີມ້າ ມາຍ່ຳຕາກ້າ ພໍ່ເຖົ້າສາ.
ມື້ເຊົ້າມາ ພໍ່ເຖົ້າສາ ຖືພ້າໂຕ້ ໄປໄລ່ມ້າ.
ແມ່ປ້າດີ ກໍມາຫາ ພໍ່ເຖົ້າສາ ໄປໃສ່ໄຊ
ໄດ້ປາຄໍ່ ສີ່ຫ້າຕົວ.



# ແມ່ ກັກ (ຕົວ ກ ສະກົດ)



ນົກແຂກ

| |
|---|
| ×ັກ ×າກ ×ິກ ×ີກ ×ຶກ ×ືກ ×ຸກ ×ູກ ເ×ັກ ເ×ກ ແ×ັກ ແ×ກ |
| ×ົກ ໂ×ກ ×ັອກ ×ອກ ເ×ິກ ເ×ີກ ×ັຽກ ×ຽກ ×ັວກ ×ວກ ເ×ຶອກ ເ×ືອກ |

ນົກແຂກ ຈອກຕັກນໍ້າ ໄກ່ຕົ໊ອກ ແບກໄມ້ໜັກ ມັກສະໜຸກ ເປືອກໄມ້ ມັກຕະຫຼົກ

ເລີກວຽກ ປາກກາ ບອກນໍ້າເມີກ ລຸກແຕ່ເດິກ ທໍາວຽກ

ຫັດຂຽນ: ລຸກແຕ່ເດິກ ຕັກນໍ້າ ແລະ ຕໍາເຂົ້າ

ລຸກແຕ່ເດິກ ຕັກນໍ້າ ແລະ ຕໍາເຂົ້າ



ປາກກາ



ຈອກຕັກນໍ້າ



ໄກ່ຕົ໊ອກ

# ຫັດອ່ານແມ່ ກັກ

ຕາມາກ ໄປຕຶກແຫ ຖືກປາດຸກ
ຢູ່ນ້ຳເລິກ ປາດຸກປັກ ມືຕາມາກ
ພວກໄປຕີເຜືອກໄດ້ມາເອົາອອກໃຫ້. ຕາມາກ
ເອົາເປືອກໝາກມາໃສ່. ຢູ່ໃນກົກໝາກ
ມີລູກນົກແຂກ ຫາກໍມີປີກ. ຕາມາກ
ຫຼີກຈາກບອກ ໜີໄປໂຄກ ໄປພໍ້ໝາຈອກ
ຢູ່ໃນໂສກ.

ເຝິກຂຽນ: ໝາຈອກ ຢູ່ໃນປ່າ

ໝາຈອກ ຢູ່ໃນປ່າ

ແຫ





ໝາຈອກ ລູກນົກແຂກ

# ແມ່ກົດ (ຕົວ ດ ສະກົດ)

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| ×ັດ | ×າດ | ×ິດ | ×ີດ | ×ຶດ | ×ຸດ | ×ູດ | ເ×ັດ | ເ×ດ | ແ×ັດ | ແ×ດ |
| ×ົດ | ໂ×ດ | ×ັອດ | ×ອດ | ເ×ິດ | ເ×ີດ | ×ັຽດ | ×ຽດ | ×ັວດ | ×ວດ | ເ×ຶອດ ເ×ືອດ |

ມີດຕັດ ດອກເກດ ສະອາດ ປາກະເດີດ ປະໂຫຍດ ປະເທດ ເຊືອກໝວດ

ສີສຽດ ເດັກສະຫຼາດ ຈິດໃຈ ເລືອດເນື້ອ ສະຫຼະຊີວິດເພື່ອຊາດ

ເຝິກຂຽນ: ເດັກດີ ຮັກປະເທດຊາດ

ເດັກດີ ຮັກປະເທດຊາດ


ປາກະເດີດ


ເປັດ


ສີສຽດ


ມີດຕັດ

# ແມ່ ກັບ (ຕົວ ບ ສະກົດ)

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| xັບ | xາບ | xິບ | xີບ | xຶບ | xືບ | xຸບ | xູບ | ເxັບ | ເxບ | ແxັບ | ແxບ |
| xົບ | ໂxບ | xັອບ | xອບ | ເxິບ | ເxີບ | xັຽບ | xຽບ | xັວບ | xວບ | ເxຶອບ | ເxືອບ |

ກາບດອກບົວ ຖືກຸບ ເກັບຜັກຕົບ ໃສ່ລອບ ເອົາກົບຂຽດ ແລະປາແຕບ
ສຸບເກີບ ໝວກແກັບ ຫຍັບເຂົ້າ ເກືອບປຽບ ໝາກບວບ



ດອກບົວ



ໝວກ

**ຝຶກຂຽນ: ເດັກ ເຄົາລົບ ນັບຖືພໍ່ແມ່**

ເດັກ ເຄົາລົບ ນັບຖືພໍ່ແມ່



ກົບ



ໝາກບວບ

# ບຸນຊ້ອມແມ່ ກັດ

ປ້າພັດ ແລະປ້າຫວາດ ໄປຊື້ໝາກເຜັດ ທີ່ຕະຫຼາດ.
ປ້າມາກ ໄປຊື້ສີສຽດ ແລະນວດ. ເຂົາໂຄສະນາວ່າ
ໃຫ້ເຮົາສະຫຼະຊີວິດ ເລືອດ ເນື້ອ ເພື່ອປະເທດຊາດ.
ແພດໄດ້ອອກປະກາດ ວ່າ: ປີນີ້ ມີພະຍາດຕິດແປດ.
ທີ່ວັດມີ ພິທີບວດນາກ.



# ບົດຊ້ອມແມ່ ກັບ

ປ້າອົບກັບປ້າຕົບ ໄປຊື້ຜັກຕົບ ແລະຫມາກຈັບ. ຂ້າພະເຈົ້າ ຫັດນັບ ຫ້າ ຫົກ ເຈັດ ແປດ ເກົ້າ ສິບ. ນົກຈິບ ໄລ່ແຫບກັບ ນົກຂາບ. ປ້າລັບ ໄປເຮັດຕູບ ຢູ່ຕອນຂອບ. ທຸກມື້ນີ້ ເຂົາຖືລະບອບ ປະຊາທິປະໄຕ ທຸກປະເທດ. ມື້ເຊົ້ານີ້ ເກືອບເກີດເຫດ ເພາະລົດຍຽບ ກົກໝາກຂຽບ ຢູ່ລຽບເຄືອໝາກແປບ.



ໝາກຂຽບ



ນົກຈິບ

# ແມ່ ກັງ (ຕົວ ງ ສະກົດ)

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| xັງ | xາງ | xິງ | xີງ | xຶງ | xືງ | ເxັງ | ເxງ | ແxັງ | ແxງ | xົງ | ໂxງ |
| xັອງ | xອງ | ເxິງ | ເxີງ | xັຽງ | xຽງ | xັວງ | xວງ | ເxຶອງ | ເxືອງ | | |

ທຸງແດງ ຊ້າງຜືອກ ເມືອງຫຼວງພະບາງ ກວ້າງຂວາງ ຢູ່ຫວ່າງ ນ້ຳຂອງ
ແຈ້ງສະຫວ່າງດີ ຊ້າງເອົາງວງກິ່ງໄມ້ ສຽງດັງກ້ອງຮອດຫູ



ຊ້າງເຜືອກ



ທຸງແດງ

# ຫັດອ່ານ ແມ່ ກັງ

| | | |
|---|---|---|
| ຟັງສຽງ | ເສືອ ສິງ ຊ້າງ | ຄະນອງເນືອງໃນປ່າ |
| ມີທັງ | ຈິບຈາບຈູ້ | ຈາແຈ້ງສິ່ງສຽງ |
| ແລເບິ່ງ | ລະມັ່ງມ້າ | ມອງໝູ່ມະຫິງສາ |
| ບາງພ່ອງ | ອຶງຄະນຶງສຽງ | ສິ່ງແຮງເຮັ້ອງ |
| ມອງທີ່ | ຍູງຍາງໄມ້ | ຝູງຊະນີທັງຄ່າງ |
| ຫຼິງລ່ຳ | ແລໝາກໄມ້ | ຄະໂຍງຢື້ຍ່ອງໄປ |



# ແມ່ ກັນ (ຕົວ ນ ສະກົດ)

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| ×ັນ | ×ານ | ×ິນ | ×ີນ | ×ຶນ | ×ືນ | ×ຸນ | ×ູນ | ເ×ັນ | ເ×ນ | ແ×ັນ | ແ×ນ |
| ×ົນ | ໂ×ນ | ×ັອນ | ×ອນ | ເ×ິນ | ເ×ີນ | ×ັຽນ | ×ຽນ | ×ັວນ | ×ວນ | ເ×ຶອນ | ເ×ືອນ |

ຖືຂັນເງິນ ທູນຫົວ ຫາບຸນຄຸນ  ພໍ່ແມ່ ແລະ ອາຈານ. ໄປໂຮງຮຽນເພື່ອຮຽນຂຽນ ແລະ ອ່ານ.  ຖະໜົນ ຫົນທາງ ເປັນປະໂຫຍດ  ແກ່ບ້ານເມືອງ.

ເຝິກຂຽນ:    ຄວນກະຕັນຍູ ຕໍ່ຄູບາ ອາຈານ

ຄວນກະຕັນຍູ ຕໍ່ຄູບາ ອາຈານ



ຂັນເງິນ

# ແມ່ ກົມ (ຕົວ ມ ສະກົດ)

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| ×ັມ | ×າມ | ×ິມ | ×ີມ | ×ຶມ | ×ຸມ | ×ູມ | ເ×ັມ | ເ×ມ | ແ×ັມ | ແ×ມ | |
| ×ືມ | ໂ×ມ | ×ັອມ | ×ອມ | ເ×ິມ | ເ×ີມ | ×ັຽມ | ×ຽມ | ×ັວມ | ×ວມ | ເ×ຶອມ | ເ×ືອມ |

ຊາມ ໂຄມໄຟ ຄວາມ ສ້ອມແຊມ ສະເຫຼີມ ບວມຜ້າຫົ່ມ ກັບເຂັມ ອອມຜັກຫຽມດອງ ດົມດອກໄມ້ ນໍ້າຫອມ ທໍາມະດາ ເຮົາຕ້ອງສະອາດ

ຫັດຂຽນ: ດົມກິ່ນ ນໍ້າຫອມ

ດົມກິ່ນ ນໍ້າຫອມ



ບວມຜ້າຫົ່ມ



ໂຄມໄຟ

ໝາຍເຫດ: ×ັມ ໃຫ້ໃຊ້ ×ໍາ ແທນ

# ຫັດອ່ານ ແມ່ ກັນ

ໃນດ່ານແດນດິນພື້ນ ນະຄອນສີສະຕະນາກ
ຍິນສະໜຸກມ່ວນແມ້ງ ເມືອງຟ້າກໍໄປ່ປານ
ພໍເມື່ອ ໝົດເຂດຟ້າ ເດືອນດ່ວນລະດູຝົນ
ເດືອນສິບສອງເພັງພໍ ພຸ່ງພະແຂໄຂແຈ້ງ
ຝູງຊໍ່າຊົນໄປໄຫວ້ ເຈດີພະທາດໃຫຍ່
ຈຸດໝູ່ທຽນທູບໄຕ້ ບູຊາເຈົ້າໜໍ່ພຸດໂທ



# ທັດອ່ານປະສົມ

ແລເຫັນ ຟ້າມືດຄຶ້ມ
ເຮົາສ່ອງແນມນຳຂອງ
ເຫັນແຕ່  ອຶມຄຶມຟ້າ
ພັດໝູ່ເມກແລະເຝື້ອ
ບາງພ່ອງເປັນຊໍ່ຊ້ອງ
ບາງພ່ອງມີສັນສີ
ຫຼືງທ່າເວີນວັງກວ້າງ
ລົມພັດຟອງຍວກຍູ້

ຄະນິງເບັ່ງບັງບົດ
ທ່າເວີນວັງກວ້າງ
ຍາມແລງລົມລ່ວງ
ໄຫຼກົ້ວກໍ່ກວມ
ເງື້ອມໂງ່ນງາມສະເໜີ
ສິ່ງມອມເມີນຊູ້
ເຫັນເຮືອຂຶ້ນລ່ອງ
ຍິນສະອື້ນອ່ອນໃຈ



# ແມ່ ໄກ (ຕົວ ຍ ສະກົດ)

| |
|---|
| ະັຍ xາຍ ິຍ ີຍ ຶຍ ືຍ xຸຍ xູຍ ເະັຍ ເxຍ (ແະັຍ ແxຍ) |
| ໂະັຍ ໂxຍ ະັອຍ xອຍ ເິຍ (ະັຽຍ xຽຍ) ະົວຍ xວຍ ເືອຍ ເືອຍ |

ເມີຍ ແລະ ເໝືອຍ ເອື້ອຍ ແລະອ້າຍເຂີຍ ຜູ້ຮ້າຍ ເຄີຍຂະໂມຍ

ຂ້ອຍລວຍ ເພາະຂ້ອຍຖືກຫວຍ ຮ້ອຍລ້ານ

ໝາຍເຫດ: ະັຍ ໃຫ້ໃຊ້ ໄx ແທນ.

ສ່ວນ ແະັຍ, ແxຍ, ະັຽຍ, xຽຍ, ປັດຈຸບັນ ຍັງບໍ່ມີການອອກສຽງໃນພາສາລາວ.



ດອກໄມ້

ເຝິກຂຽນ: ອ້າຍຕ້ອງຮັກນ້ອງ

ອ້າຍຕ້ອງຮັກນ້ອງ



ເໝືອຍ

# ທັດອ່ານ ແມ່ໄກ

ທີ່ໂຮງຮຽນຂອງຂ້ອຍ ມີລູກສິດຫຼາຍ. ຄູເຄີຍສອນ ໃຫ້ຂຽນລາຍ ເຮັດກະບວຍ ປັ້ນຖ້ວຍ ແລະ ອື່ນໆ ອີກຫຼາຍຢ່າງ. ມື້ພັກ ຂ້ອຍເຄີຍ ໄປລ້ຽງຄວາຍ ຊ່ອຍພໍ່ແມ່ ເພາະ ຂ້ອຍຢ້ານຂະໂມຍ ມາລັກຄວາຍ. ຢູ່ສວນຫົວນາຂ້ອຍ ເພິ່ນປູກຫມາກເດືອຍ ກ້ວຍ ແລະ ອ້ອຍ.



# ແມ່ ເກົາ (ຕົວ ວ ສະກົດ)

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| xັວ | xາວ | xິວ | xີວ | xຶວ | xືວ | xຸວ | xູວ | (ເxັວ) | ເxວ | ແxັວ | ແxວ |
| ໂxັວ | ໂxວ | (xັອວ | xອວ | ເxິວ | ເxີວ) | xັຽວ | xຽວ | (xັວວ | xວວ | ເxຶອວ | ເxືອວ) |

ສໍຂາວ ເດືອນແລະດາວ ຊາວລາວ ຜິວເຫຼືອງ ສະຫຼຽວສະຫຼາດ ໃບໄມ້ຂຽວ

ແມວບໍ່ຢູ່ ໜູເຕັ້ນ ເສືອຖືກຫ່າວ ຕາຍແລ້ວ ຄ້ຽວໝາກ ແຂ້ວບໍ່ຂາວ

ໝາຍເຫດ: xັວ ໃຫ້ໃຊ້ ເxົາ ແທນ. ສ່ວນ xັວ, ເxັວ, xັອວ, xອວ, ເxິວ, ເxີວ, xັວວ, xວວ, ເxຶອວ, ເxືອວ ປັດຈຸບັນ ຍັງບໍ່ມີການອອກສຽງໃນພາສາລາວ.

ຫັດຂຽນ: ແມວບໍ່ຢູ່ ໜູເຕັ້ນ

ແມວບໍ່ຢູ່ ໜູເຕັ້ນ



ສໍຂາວ



ໝາກ

ບົດອ່ານພິເສດ

# ເພງ ຮັກຊາດ

ເກີດເປັນລາວ ຕ້ອງຮັກລາວ ຊ່ອຍເຫຼືອລາວ
ເກີດເປັນລາວ ຕ້ອງຂະຫຍັນ ໝັ່ນປະກອບ
ສິ່ງໃດຊອບ ລາວສູ້ ຢ່າງຂຸ້ຂັ້ນ
ເຮົາເປັນລາວ ຊາດລາວ ຕ້ອງຮັກກັນ
ໃຈຜູກພັນ ສາມັກຄີ ສຸດດີເອີຍ

# ຫັດອ່ານແມ່ ເກົາ (ວ ສະກົດ)

ມື້ໜຶ່ງຂ້ອຍ ເຫັນນົກເຕັນຊິວ
ບິນວິວໆ ມາຈັບຮຽວໄຜ່
ແຄມໜອງໃຫຍ່ ຈອບໝູ່ປາຊິວ
ນົກເຕັນຫິວ ທຳກົນລໍ້ຫຼອກ
ຫົວຄຶດອອກ ຂີ້ອ່ອຍລົງມາ
ພວກໝູ່ປາ ຫຼຽວເຫັນແລ່ນຍາດ
ນົກສະຫຼາດ ບິນແສ່ວລົງກິນ
ແລ້ວເລີຍບິນ ໜີໄປໄວ່ໆ



## ກອນອ່ານ ສະຫຼະປະສົມ ໂຮງຮຽນ

ໃນໂຮງຮຽນ ມີຄຸນຫຼາຍຢ່າງ
ຄູເພິ່ນຊ່າງ ສອນໃຫ້ເຮົາດີ
ສອນວິທີ ໜັງສືແລະເລກ
ນັບເປັນເອກ ຄວາມຮູ້ຫຼາຍອັນ
ອ້ອຍຂະຫຍັນ ໄປຮຽນບໍ່ຂາດ
ໃຜປະໝາດ ບໍ່ຮູ້ໜັງສື
ຄືນັ້ນຄື ກັບຄົນຕາບອດ
ຕາບໍ່ສອດ ເຫັນແຈ້ງບ່ອນໄປ



# ໝູ່ຄູ່ໂຮງຮຽນດຽວກັນ

ໃນໂຮງຮຽນ ໝູ່ດຽວຂອງຂ້ອຍ
ໃຫຍ່ແລະນ້ອຍ ເປັນໝູ່ດຽວກັນ
ຂ້ອຍຜູກພັນ ຮັກຫອມບໍ່ຂາດ
ຄືດັ່ງຍາດ ພໍ່ແມ່ດຽວກັນ
ຂ້ອຍບໍ່ນັນ ຍາມຄູເພິ່ນສັ່ງ
ໝູ່ຂ້ອຍນັ່ງ ເປັນຖ້ານເປັນແຖວ
ບໍ່ບິນແຊວ ຖຽງກັນວິວາດ
ເຮົາແມ່ນຊາດ ລາວແທ້ຮ່ວມກັນ



ກອນອ່ານປະສົມ

# ຄອບຄົວຂອງຂ້ອຍ

ໃນຄອບຄົວ ເຮືອນຊານຂອງຂ້ອຍ
ເອື້ອຍອ້າຍຊ່ອຍ ພໍ່ແມ່ຄົວກິນ
ຂ້ອຍໄດ້ຍິນ ນ້ອງນ້ອຍຂ້ອຍແອ່ວ
ໄຫ້ແຈ້ວໆ ຫາແມ່ກິນນົມ
ຂ້ອຍໄປໂຈມ ອຸ້ມນ້ອງຕາງແມ່
ເອື້ອຍແລະແມ່ ຂອງຂ້ອຍດີໃຈ
ຂ້ອຍບໍ່ໄປ ທ່ຽວແລ່ນເລາະຫຼິ້ນ
ກິນເຂົ້າແລ້ວ ຫາອ່ານໜັງສື
ບໍ່ເຮັດຄື ເໝືອນຕັ້ງແຕ່ກ່ອນ



# ປະເທດຂອງຂ້ອຍ

ປະເທດຂ້ອຍ ຊຸ້ນຊື່ເມືອງລາວ
ລວງກວ້າງຍາວ ສຸດຕາເຫຼືອອ່ານ
ນ້ຳຂອງຜ່ານ ໄຫຼຜ່າທາງກາງ
ມີຫົນທາງ ຖະໜົນສະອາດ
ປະເທດຊາດ ລາວໃຫຍ່ໄພສານ
ເຮົາລູກຫຼານ ເກີດມາພາຍຊ້ອຍ
ຄວນຊູຊ່ອຍ ສ້າງບ້ານເມືອງລາວ
ໃຫ້ຍືນຍາວ ຕໍ່ໄປພາຍໜ້າ
ຢ່າໃຫ້ຫຼ້າ ເຂົາແທ້ໝູ່ລາວ



ວັດຊຽງທອງ






ທາດຫຼວງ



ຫໍພະແກ້ວ



ປະຕູໄຊ

# ບຸນຢູ່ວັດ

ຢູ່ບ້ານຂ້ອຍ ມີວັດສາລາ
ວັນສິນມາ ເພິ່ນໄປຟັງເທດ
ບຸນພະເຫວດ ເພິ່ນແຫ່ກັນຫຼອນ
ຂ້ອຍອອນຊອນ ຄູບາເພິ່ນເທດ
ໃຫ້ລະເຫດ ຄວາມຊົ່ວປາປັງ
ຂ້ອຍໄປຟັງ ນຳຝູງຜູ້ເຖົ້າ
ບໍ່ປາກເວົ້າ ແຊວຫຼິ້ນໄລ່ກັນ



# ປື້ມທີ່ ດອກເກດ ຈັດພິມ ທ່ານໄດ້ອ່ານຫລືຍັງ ?













ເຫຼັ້ມ 4 ແລະ 5 ອອກທ້າຍປີ 2008 ນີ້ !

















ປື້ມຫົວນີ້ ອ່ານມ່ວນຊວນຟັງ
ອ່ານດັງໆ ສຽງແມ່ອ່ອນຊ້ອຍ
ກ່ອມລູກນ້ອຍ ນອນແຈບຝັນດີ

ຈັດພິມໂດຍ

ດອກເກດ
DokkeD
Publishing Co., Ltd

ລາຄາ 24,000 ກີບ